ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0521---ຮ /ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 02 MAY 2018

# ຄຳແນະນຳ
# ກ່ຽວກັບການຈັດຕັ້ງປະຕິບັດ
# ເນື້ອໃນບາງມາດຕາ ຂອງ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ
# ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017

- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ສະບັບເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010;
- ອີງຕາມ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.

ເພື່ອເຮັດໃຫ້ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ, ມີຄວາມເປັນເອກະພາບ ແລະ ມີປະສິດທິຜົນສູງ ໃນການແກ້ໄຂສະພາບ ການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ໃນປະຈຸບັນໃຫ້ເຂົ້າສູ່ລະບຽບ ເພື່ອຜົນປະໂຫຍດຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້.

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳແນະນຳ:

## I. ຈຸດປະສົງ

ຄຳແນະນຳສະບັບນີ້ ຜັນຂະຫຍາຍ ແລະ ແນະນຳການຈັດຕັ້ງປະຕິບັດເນື້ອໃນບາງມາດຕາ ຂອງດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017 ເພື່ອໃຫ້ມີຄວາມເຂົ້າໃຈຢ່າງຈະແຈ້ງ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ, ແນໃສ່ປັບປຸງທຸລະກິດນ້ຳມັນເຊື້ອໄຟ ທີ່ມີໃນປະຈຸບັນ ໃຫ້ເຄື່ອນໄຫວທຸລະກິດ ຖືກຕ້ອງຕາມເງື່ອນໄຂທີ່ກຳນົດໃນດຳລັດດັ່ງກ່າວ.

## II. ອະທິບາຍເພີ່ມເຕີມ ຄວາມໝາຍ ຂອງບາງຄຳສັບ ແລະ ບາງຂໍ້ກຳນົດ

1. ບໍລິສັດ ນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟ ໝາຍເຖິງ ບໍລິສັດ ທີ່ມີສິດ ໃນການນຳເຂົ້ານ້ຳມັນເຊື້ອໄຟເພື່ອຈຳໜ່າຍ ໃຫ້ບໍລິສັດ ຈຳໜ່າຍ ພາຍໃນ, ລູກຄ້າຂອງຕົນ, ນຳເຂົ້າເພື່ອສົ່ງອອກຕໍ່ ຫຼື ຜ່ານແດນ ແລະ ສາມາດຊື້ ຫຼື ເປັນຕົວແທນ ໃຫ້ຜູ້ຜະລິດ-ປຸງແຕ່ງ ນ້ຳມັນເຊື້ອໄຟ ຢູ່ ສປປ ລາວ ເພື່ອສົ່ງອອກໄປຕ່າງປະເທດ, ຊຶ່ງຕ້ອງມີເງື່ອນໄຂຄົບຖ້ວນ ຕາມທີ່ກຳນົດ ໄວ້ໃນມາດຕາ 14 ຂອງດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ລວມທັງ ບໍລິສັດ ທີ່ສ້າງຕັ້ງ ກ່ອນ ແລະ ຫຼັງ ປະກາດໃຊ້ ດຳລັດດັ່ງກ່າວ. ສຳລັບ ບໍລິສັດ ທີ່ສ້າງຕັ້ງກ່ອນ ແມ່ນມີເວລາ ປັບປຸງ ພາຍໃນ ໜຶ່ງປີ ນັບແຕ່ດຳລັດດັ່ງກ່າວ ມີຜົນສັກສິດ ແລະ ໄດ້ເຜີຍແຜ່ດຳລັດ ພ້ອມດ້ວຍຄຳແນະນຳສະບັບນີ້.
2. ບໍລິສັດ ຈຳໜ່າຍ ພາຍໃນ ໝາຍເຖິງ ບໍລິສັດ ທີ່ມີສິດຊື້ນ້ຳມັນເຊື້ອໄຟ ຈາກບໍລິສັດ ນຳເຂົ້າ ແລະ ສົ່ງອອກ, ຊື້ຈາກຜູ້ຜະລິດ-ປຸງແຕ່ງ ຢູ່ ພາຍໃນ ເພື່ອຈຳໜ່າຍໃຫ້ປໍ້ານ້ຳມັນເຊື້ອໄຟ ແລະ ລູກຄ້າຂອງຕົນ, ແຕ່ບໍ່ສາມາດ ນຳເຂົ້າ

ແລະ ສົ່ງອອກ ນ້ຳມັນເຊື້ອໄຟ ດ້ວຍບໍລິສັດ ຂອງຕົນເອງໄດ້. ຢາກເຄື່ອນໄຫວໄດ້ຄືດັ່ງກ່າວ ຕ້ອງມີເງື່ອນໄຂຄົບຖ້ວນຕາມທີ່ກຳນົດ ໄວ້ໃນມາດຕາ 23 ຂອງດຳລັດ ວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ.

3. ປ້ຳບໍລິສັດລົງທຶນເອງ ໝາຍເຖິງ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ທີ່ບໍລິສັດ ຈຳໜ່າຍພາຍໃນ ເປັນຜູ້ລົງທຶນກໍ່ສ້າງ ແລະ ດຳເນີນການຂາຍຍ່ອຍດ້ວຍຕົນເອງ ຫຼື ໃຫ້ບຸກຄົນອື່ນເປັນຜູ້ດຳເນີນການຂາຍຍ່ອຍ ໂດຍຂຶ້ນທະບຽນເປັນທຸລະກິດຂາຍຍ່ອຍນ້ຳມັນເຊື້ອໄຟ.

4. ປ້ຳຕົວແທນ ໝາຍເຖິງ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ທີ່ບຸກຄົນ ຫຼື ນິຕິບຸກຄົນ ໄດ້ລົງທຶນປຸກສ້າງ, ດຳເນີນທຸລະກິດເອງ ຫຼື ເປັນການຮ່ວມທຶນ ຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ ແລະ ເປັນຕົວແທນຈຳໜ່າຍໃຫ້ບໍລິສັດຈຳໜ່າຍພາຍໃນໃດໜຶ່ງ ຊຶ່ງຕ້ອງຂຶ້ນເຄື່ອງໝາຍ ຫຼື ສັນຍາລັກ (Logo) ຂອງບໍລິສັດຈຳໜ່າຍພາຍໃນທີ່ຕົນເປັນຕົວແທນເທົ່ານັ້ນ.

5. ລູກຄ້າຂອງຕົນ ສຳລັບບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ແມ່ນໂຄງການສຳປະທານ/ໂຄງການລົງທຶນ ທີ່ລັດຖະບານອະນຸມັດ ແລະ ໄດ້ຮັບນະໂຍບາຍຍົກເວັ້ນພາສີອາກອນ ແລະ ຄ່າທຳນຽມຕ່າງໆ ຫຼື ບໍລິສັດຈຳໜ່າຍພາຍໃນ ທີ່ມີສັນຍາຊື້-ຂາຍ.

6. ລູກຄ້າຂອງຕົນ ສຳລັບບໍລິສັດຈຳໜ່າຍພາຍໃນ ແມ່ນໂຄງການສຳປະທານ/ໂຄງການລົງທຶນ ທີ່ລັດຖະບານອະນຸມັດ, ລູກຄ້າໂຄງການທົ່ວໄປ, ບໍລິສັດກໍ່ສ້າງ, ບໍລິສັດຂົນສົ່ງ, ຂຸດຄົ້ນແຮ່ຊາຍທົ່ວໄປ ທີ່ບໍ່ໄດ້ຮັບນະໂຍບາຍຍົກເວັ້ນພາສີອາກອນ ແລະ ຄ່າທຳນຽມຕ່າງໆ.

7. ທຶນຈົດທະບຽນ: ແມ່ນມູນຄ່າຂອງຊັບສິນທັງໝົດ ໂດຍແບ່ງອອກເປັນເງິນ, ຮຸ້ນ ແລະ ວັດຖຸ ຊຶ່ງຕ້ອງກຳນົດໃຫ້ເຫັນຈະແຈ້ງເປັນຊັບສິນຂອງບໍລິສັດນັ້ນໆຕະຫຼອດໄລຍະການດຳເນີນທຸລະກິດ, ມູນຄ່າຊັບສິນຕ້ອງບໍ່ໃຫ້ຫຼຸດທຶນຈົດທະບຽນ.

8. ການຖອກທຶນຈົດທະບຽນ ນອກຈາກຈະປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດແລ້ວ, ທຶນຄົງທີ່ ທີ່ຕິດພັນກັບທຸລະກິດນ້ຳມັນເຊື້ອໄຟ ຕ້ອງໄດ້ຮັບການຢັ້ງຢືນຈາກ ບໍລິສັດ ປະເມີນຊັບສິນ ທີ່ຈົດທະບຽນຖືກຕ້ອງໃນ ສປປ ລາວ. ທຶນໝູນວຽນ ຕ້ອງໄດ້ຮັບການຢັ້ງຢືນ ຈາກທະນາຄານແຫ່ງ ສປປ ລາວ ຫຼື ທະນາຄານທຸລະກິດ ທີ່ຈົດທະບຽນຖືກຕ້ອງໃນ ສປປ ລາວ ແລະ ການຢັ້ງຢືນທຶນດັ່ງກ່າວ ຕ້ອງມີການເຄື່ອນໄຫວຢ່າງຕ່ຳ 6 ເດືອນ, ຊຶ່ງທັງ 2 ການຢັ້ງຢືນນີ້ ແມ່ນບໍລິສັດ ຕ້ອງດຳເນີນເອງ.

9. ສາງນ້ຳມັນເຊື້ອໄຟ ຂອງບໍລິສັດ ນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ, ບໍລິສັດ ຈຳໜ່າຍພາຍໃນ ແລະ ບໍລິສັດ ໃຫ້ບໍລິການເຊົ່າສາງນ້ຳມັນເຊື້ອໄຟ ແມ່ນລວມເອົາບໍລິມາດສາງຂອງບໍລິສັດ ທີ່ຕັ້ງຢູ່ຈຸດດຽວ ຫຼື ຫຼາຍຈຸດລວມເຂົ້າກັນ (ຍົກເວັ້ນສາງທີ່ຕິດຕັ້ງຢູ່ໂຄງການ) ແລະ ຕ້ອງສອດຄ່ອງກັບລະບຽບການຂອງຂະແໜງການກ່ຽວຂ້ອງວາງອອກ.

10. ສາງນ້ຳມັນເຊື້ອໄຟ ຂອງບໍລິສັດ ນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟ ຕ້ອງຕັ້ງຢູ່ແຂວງ ຫຼື ດ່ານສາກົນທີ່ມີການນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟ ແລະ ຕ້ອງຕັ້ງຢູ່ສະຖານທີ່ຕາມແຜນຜັງການນຳໃຊ້ທີ່ພາກສ່ວນກ່ຽວຂ້ອງກຳນົດ.

11. ສາງນ້ຳມັນເຊື້ອໄຟຂອງ ບໍລິສັດ ຈຳໜ່າຍພາຍໃນ ຕ້ອງຕັ້ງຢູ່ແຂວງ ບ່ອນທີ່ມີການຈຳໜ່າຍນ້ຳມັນເຊື້ອໄຟ ແລະ ຕ້ອງຕັ້ງຢູ່ສະຖານທີ່ຕາມແຜນຜັງການນຳໃຊ້ທີ່ພາກສ່ວນກ່ຽວຂ້ອງກຳນົດ.

12. ສະຖານທີ່ຕັ້ງຂອງປ້ຳນ້ຳມັນເຊື້ອໄຟ ນອກຈາກປະຕິບັດຕາມມາດຖານເງື່ອນໄຂຂອງດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ແລະ ລະບຽບການຂະແໜງໂຍທາທິການ ແລະ ຂົນສົ່ງແລ້ວ, ໃນກໍລະນີຕັ້ງຢູ່ຊ້າຍຂວາຍກັນ (ບໍ່ໃຫ້ເຊິ່ງໜ້າກັນ) ຕ້ອງພິຈາລະນາສະເພາະແຕ່ເສັ້ນທາງສາຍຫຼັກ ແລະ ສາຍເອກ ທີ່ລະບຽບນຳໃຊ້ທີ່ດິນຜັງເມືອງໄດ້ກຳນົດໄວ້ ຫຼື ສະຖານທີ່ ທີ່ຖືກກຳນົດເປັນເຂດບໍລິການສະເພາະ ເຊັ່ນ: ສະຖານທີ່ພັກລົດ ຕາມເສັ້ນທາງດ່ວນ ຫຼື ຕາມການກຳນົດສະເພາະຂອງອຳນາດການປົກຄອງແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ.

13. ການຕິດເຄື່ອງໝາຍ ຫຼື ສັນຍາລັກ (Logo) ແມ່ນປະຕິບັດຄືດັ່ງນີ້:

13.1. ບໍລິສັດ ນໍາເຂົ້າ-ສົ່ງອອກ ນໍ້າມັນເຊື້ອໄຟ: ຕິດ Logo ຂອງບໍລິສັດໃສ່ ສາງ, ຖັງ ແລະ ພາຫະນະຂົນສົ່ງນໍ້າມັນເຊື້ອໄຟ;

13.2. ບໍລິສັດ ຈໍາໜ່າຍພາຍໃນ: ຕິດ Logo ຂອງບໍລິສັດໃສ່ ສາງ, ຖັງ, ປໍ້າ ແລະ ພາຫະນະຂົນສົ່ງນໍ້າມັນເຊື້ອໄຟ;

13.3. ບໍລິສັດ ໃຫ້ເຊົ່າສາງນໍ້າມັນເຊື້ອໄຟ: ຕິດ Logo ຂອງບໍລິສັດຜູ້ເຊົ່າໃສ່ ສາງ ແລະ ຖັງນໍ້າມັນເຊື້ອໄຟ;

13.4. ບໍລິສັດ ໃຫ້ເຊົ່າພາຫະນະຂົນສົ່ງນໍ້າມັນເຊື້ອໄຟ: ຕິດ Logo ຂອງບໍລິສັດຜູ້ເຊົ່າໃສ່ ພາຫະນະຂົນສົ່ງນໍ້າມັນເຊື້ອໄຟ;

13.5. ບໍລິສັດ ໃຫ້ບໍລິການຂົນສົ່ງນໍ້າມັນເຊື້ອໄຟ: ຕິດ Logo ຂອງບໍລິສັດ ໃສ່ພາຫະນະຂົນສົ່ງນໍ້າມັນເຊື້ອໄຟ;

13.6. ການຕິດ Logo ຂ້າງເທິງນີ້ແມ່ນສາມາດຕິດໄດ້ສະເພາະ Logo ຂອງບໍລິສັດໃດໜຶ່ງເທົ່ານັ້ນ.

14. ລາຄານໍ້າມັນເຊື້ອໄຟຕະຫຼາດໂລກ ແມ່ນລາຄານໍ້າມັນເຊື້ອໄຟສໍາເລັດຮູບທີ່ຊື້-ຂາຍໃນຕະຫຼາດໂລກ ໂດຍຖືເອົາລາຄາ MOPS ຕະຫຼາດສິງກະໂປ ມາເປັນບ່ອນອີງໃນການຄິດໄລ່ລາຄານໍາເຂົ້າ (CIF) ໃນແຕ່ລະໄລຍະ.

15. ໃບຢັ້ງຢືນການເຄື່ອນໄຫວທຸລະກິດ ມີອາຍຸນໍາໃຊ້ ດັ່ງນີ້:

15.1. ບໍລິສັດ ນໍາເຂົ້າ ແລະ ສົ່ງອອກ ນໍ້າມັນເຊື້ອໄຟ, ບໍລິສັດ ຈໍາໜ່າຍພາຍໃນ ແລະ ບໍລິສັດ ໃຫ້ເຊົ່າສາງນໍ້າມັນເຊື້ອໄຟ ມີອາຍຸນໍາໃຊ້ 3 ປີ ຫຼັງຈາກມື້ຢັ້ງຢືນ;

15.2. ປໍ້ານໍ້າມັນເຊື້ອໄຟ ມີອາຍຸນໍາໃຊ້ 2 ປີ ຫຼັງຈາກມື້ຢັ້ງຢືນ.

16. ການຕໍ່ໃບຢັ້ງຢືນການເຄື່ອນໄຫວທຸລະກິດ ແມ່ນໃຫ້ສະເໜີກ່ອນໝົດອາຍຸ 6 ເດືອນ ດັ່ງນີ້:

16.1. ບໍລິສັດ ນໍາເຂົ້າ ແລະ ສົ່ງອອກ ນໍ້າມັນເຊື້ອໄຟ, ບໍລິສັດ ຈໍາໜ່າຍພາຍໃນ, ບໍລິສັດ ໃຫ້ເຊົ່າສາງນໍ້າມັນເຊື້ອໄຟ ສະເໜີຕໍ່ກົມການຄ້າພາຍໃນ, ກະຊວງອຸດສາຫະກໍາ ແລະ ການຄ້າ.

16.2. ປໍ້ານໍ້າມັນເຊື້ອໄຟ ສະເໜີຕໍ່ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ.

## III. ການສ້າງຕັ້ງ ແລະ ການເຄື່ອນໄຫວ ທຸລະກິດນໍ້າມັນເຊື້ອໄຟ

### 1. ການສ້າງຕັ້ງ ແລະ ການເຄື່ອນໄຫວ ທຸລະກິດຂອງ ບໍລິສັດ ນໍາເຂົ້າ ແລະ ສົ່ງອອກ ນໍ້າມັນເຊື້ອໄຟ

### 1.1. ບໍລິສັດ ທີ່ສ້າງຕັ້ງ ກ່ອນ ປະກາດໃຊ້ ດໍາລັດວ່າດ້ວຍ ທຸລະກິດ ນໍ້າມັນເຊື້ອໄຟ

ບໍລິສັດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ ກ່ອນ ປະກາດໃຊ້ ດໍາລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ຕ້ອງປັບປຸງໃຫ້ໄດ້ຕາມເງື່ອນໄຂການເຄື່ອນໄຫວທຸລະກິດ ຕາມທີ່ກໍານົດໃນດໍາລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ຊຶ່ງສາມາດປັບປຸງ ດ້ວຍຮູບແບບຄວບ, ຮ່ວມກັບບໍລິສັດອື່ນ ຫຼື ປັບປຸງດ້ວຍຕົນເອງ. ບໍລິສັດໃດບໍ່ສາມາດປັບປຸງໄດ້ຕາມເງື່ອນໄຂ ແມ່ນຕ້ອງຍຸບເລີກ ຫຼື ຫັນເປັນ ບໍລິສັດ ຈໍາໜ່າຍ ພາຍໃນ, ບໍລິສັດ ໃຫ້ເຊົ່າສາງນໍ້າມັນເຊື້ອໄຟ ດັ່ງນີ້:

#### 1.1.1. ການປັບປຸງເປັນ ບໍລິສັດ ນໍາເຂົ້າ ແລະ ສົ່ງອອກ ນໍ້າມັນເຊື້ອໄຟ

ການປັບປຸງເປັນ ບໍລິສັດ ນໍາເຂົ້າ ແລະ ສົ່ງອອກ ນໍ້າມັນເຊື້ອໄຟ ຕາມເງື່ອນໄຂທີ່ກໍານົດໃນມາດຕາ 14 ຂອງດໍາລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ໃຫ້ປະຕິບັດດັ່ງນີ້:

(1). ປັບປຸງໃຫ້ສອດຄ່ອງ ຕາມເງື່ອນໄຂ ການຂຶ້ນທະບຽນວິສາຫະກິດ ທີ່ກໍານົດ ໃນມາດຕາ 7 ຂອງດໍາລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ແລ້ວປະກອບເອກະສານສະເໜີຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ, ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອດັດແກ້ທະບຽນວິສາຫະກິດ ຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

(2). ປັບປຸງໃຫ້ສອດຄ່ອງ ຕາມເງື່ອນໄຂ ການເຄື່ອນໄຫວ ທີ່ກໍານົດໃນມາດຕາ 14 ຂອງດໍາລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ພາຍໃນ ໜຶ່ງປີ ນັບແຕ່ດໍາລັດດັ່ງກ່າວ ມີຜົນສັກສິດ ແລະ ໄດ້ເຜີຍແຜ່ດໍາລັດ ພ້ອມດ້ວຍຄໍາແນະນໍາສະບັບນີ້;

(3). ພາຍຫຼັງ ດັດແກ້ທະບຽນວິສາຫະກິດ ແລະ ປະຕິບັດຕາມເງື່ອນໄຂ ທີ່ກໍານົດໃນ ມາດຕາ 14 ຂອງດໍາລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟສໍາເລັດ ພ້ອມທັງເຮັດປະກັນໄພ ຕາມກົດໝາຍ ວ່າດ້ວຍການປະກັນໄພ ຂອງ ສປປ

ລາວ ແລະ ໄດ້ເຂົ້າເປັນສະມາຊິກສະມາຄົມນ້ຳມັນເຊື້ອໄຟ ແລ້ວ ໃຫ້ປະກອບເອກະສານ ຕາມທີ່ກຳນົດໄວ້ ໃນມາດຕາ 12 ຂອງດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະເໜີຕໍ່ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາ ອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດ ບໍລິສັດ ນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟ;

(4). ພາຍຫຼັງໄດ້ຮັບໃບຢັ້ງຢືນການເຄື່ອນໄຫວທຸລະກິດແລ້ວ ຈຶ່ງສາມາດເຄື່ອນໄຫວທຸລະກິດໄດ້ ຕາມລະບຽບກົດໝາຍ. ຖ້າບໍລິສັດໃດຫາກບໍ່ສາມາດປັບປຸງໄດ້ຕາມເງື່ອນໄຂ ໃນກຳນົດເວລາ ແມ່ນຕ້ອງໄດ້ໂຈະການເຄື່ອນໄຫວທຸລະກິດ ຈົນກວ່າປັບປຸງສຳເລັດ ແລະ ໄດ້ໃບຢັ້ງຢືນການເຄື່ອນໄຫວທຸລະກິດ ຈຶ່ງສາມາດເຄື່ອນໄຫວທຸລະກິດໄດ້ ຕາມລະບຽບກົດໝາຍ.

**1.1.2. ການປັບປຸງເປັນ ບໍລິສັດ ຈຳໜ່າຍພາຍໃນ**

ການປັບປຸງເປັນ ບໍລິສັດ ຈຳໜ່າຍພາຍໃນ ຕາມເງື່ອນໄຂທີ່ກຳນົດໃນມາດຕາ 23 ຂອງດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອ ໃຫ້ປະຕິບັດ ດັ່ງນີ້:

(1). ປັບປຸງໃຫ້ສອດຄ່ອງ ຕາມເງື່ອນໄຂ ການຂຶ້ນທະບຽນວິສາຫະກິດ ທີ່ກຳນົດ ໃນມາດຕາ 7 ຂອງດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ແລ້ວປະກອບເອກະສານສະເໜີຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອດັດແກ້ທະບຽນວິສາຫະກິດ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ;

(2). ປັບປຸງໃຫ້ສອດຄ່ອງ ຕາມເງື່ອນໄຂ ການເຄື່ອນໄຫວທຸລະກິດ ທີ່ກຳນົດໃນມາດຕາ 23 ຂອງດຳລັດ ວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ;

(3). ພາຍຫຼັງ ດັດແກ້ທະບຽນວິສາຫະກິດ ແລະ ປະຕິບັດຕາມເງື່ອນໄຂ ທີ່ກຳນົດໃນ ມາດຕາ 23 ຂອງດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສຳເລັດ ພ້ອມທັງເຮັດປະກັນໄພ ຕາມກົດໝາຍ ວ່າດ້ວຍການປະກັນໄພ ຂອງ ສປປ ລາວ ແລະ ໄດ້ເຂົ້າເປັນສະມາຊິກສະມາຄົມນ້ຳມັນເຊື້ອໄຟ ແລ້ວ ໃຫ້ປະກອບເອກະສານ ຕາມທີ່ກຳນົດໄວ້ ໃນມາດຕາ 21 ຂອງດຳລັດ ວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະເໜີຕໍ່ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດ ຂອງບໍລິສັດ ຈຳໜ່າຍ ພາຍໃນ;

(4). ພາຍຫຼັງ ໄດ້ຮັບໃບຢັ້ງຢືນການເຄື່ອນໄຫວທຸລະກິດແລ້ວ ຈຶ່ງສາມາດເຄື່ອນໄຫວທຸລະກິດໄດ້ ຕາມລະບຽບກົດໝາຍ.

**1.2. ບໍລິສັດ ທີ່ສ້າງຕັ້ງ ຫຼັງ ປະກາດໃຊ້ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ**

**1.2.1. ການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ ຂອງບໍລິສັດ ນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟ**

ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດ ຂອງ ບໍລິສັດ ນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ ຫຼັງ ປະກາດໃຊ້ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

(1). ປະກອບເອກະສານ ຕາມທີ່ໄດ້ກຳນົດ ໃນມາດຕາ 8 ຂອງດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະເໜີຕໍ່ ເຈົ້າໜ້າທີ່ທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ;

(2). ຫຼັງຈາກໄດ້ໃບທະບຽນວິສາຫະກິດແລ້ວ ໃຫ້ສະເໜີຕໍ່ຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອອອກໃບຢັ້ງຢືນຜັງເມືອງ ກ່ຽວກັບ ທີ່ຕັ້ງ ແລະ ຮັບຮອງແບບແຜນຜັງເຕັກນິກການກໍ່ສ້າງສາງນ້ຳມັນເຊື້ອໄຟ;

(3). ພາຍຫຼັງໄດ້ຮັບໃບຢັ້ງຢືນຜັງເມືອງ ກ່ຽວກັບ ທີ່ຕັ້ງ ແລະ ຮັບຮອງແຜນຜັງເຕັກນິກການກໍ່ສ້າງສາງນ້ຳມັນເຊື້ອໄຟແລ້ວ ຈຶ່ງສ້າງບົດປະເມີນຜົນກະທົບຕໍ່ສິ່ງ ແວດລ້ອມ ແລະ ສັງຄົມ ຂອງສາງນ້ຳມັນເຊື້ອໄຟ ແລະ ສະເໜີຕໍ່ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງ ແວດລ້ອມ ເພື່ອອອກໃບຢັ້ງຢືນ;

(4). ພາຍຫຼັງໄດ້ຮັບໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ສັງຄົມແລ້ວ ຈຶ່ງຂໍອະນຸຍາດປຸກສ້າງສາງ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງ, ໄດ້ຮັບອະນຸຍາດປຸກສ້າງແລ້ວ ຈຶ່ງສາມາດລົງມືກໍ່ສ້າງສາງ ແລະ ຕິດຕັ້ງລະບົບປ້ອງກັນອັກຄີໄພ;

(5). ພາຍຫຼັງກໍ່ສ້າງສາງ ສຳເລັດ ໃຫ້ສະເໜີຕໍ່ຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອລົງກວດກາ ແລະ ຢັ້ງຢືນຮັບຮອງຄວາມຖືກຕ້ອງຂອງການກໍ່ສ້າງສາງ, ພ້ອມດຽວກັນ ກໍ່ໃຫ້ສະເໜີຕໍ່ ຂະແໜງປ້ອງກັນຄວາມສະຫງົບ ເພື່ອລົງກວດກາ ແລະ ອອກໃບຢັ້ງຢືນການກວດກາກ່ຽວກັບ ຄວາມປອດໄພທາງດ້ານການສະກັດກັ້ນ ແລະ ຕ້ານອັກຄີໄພ;

(6). ພາຍຫຼັງສຳເລັດຕາມຂັ້ນຕອນ ດັ່ງກ່າວມາຂ້າງເທິງນີ້ແລ້ວ ໃຫ້ເຮັດປະກັນໄພ ຕາມກົດໝາຍ ວ່າດ້ວຍ ການປະກັນໄພ ຂອງ ສປປ ລາວ ແລະ ສະໝັກເຂົ້າເປັນສະມາຊິກສະມາຄົມນ້ຳມັນເຊື້ອໄຟ;

(7). ຫຼັງຈາກເຮັດປະກັນໄພ ແລະ ໄດ້ເຂົ້າເປັນສະມາຊິກ ສະມາຄົມນ້ຳມັນເຊື້ອໄຟແລ້ວ ໃຫ້ປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງດຳລັດ ວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະເໜີຕໍ່ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດ ບໍລິສັດ ນຳເຂົ້າ ແລະ ສົ່ງອອກ ນ້ຳມັນເຊື້ອໄຟ;

(8). ພາຍຫຼັງໄດ້ຮັບໃບຢັ້ງຢືນການເຄື່ອນໄຫວທຸລະກິດແລ້ວ ຈຶ່ງສາມາດເຄື່ອນໄຫວທຸລະກິດໄດ້ ຕາມລະບຽບກົດໝາຍ.

**1.2.2. ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດ ຂອງ ບໍລິສັດ ຈຳໜ່າຍພາຍໃນ**

ການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດຂອງ ບໍລິສັດ ຈຳໜ່າຍພາຍໃນ ຫຼັງ ປະກາດໃຊ້ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

(1). ປະກອບເອກະສານ ຕາມທີ່ໄດ້ກຳນົດ ໃນມາດຕາ 8 ຂອງດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະເໜີຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຂຶ້ນທະບຽນວິສາຫະກິດ ຕາມຂັ້ນຕອນທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍ ວິສາຫະກິດ;

(2). ຫຼັງຈາກໄດ້ໃບທະບຽນວິສາຫະກິດແລ້ວ ໃຫ້ສະເໜີຕໍ່ ຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອຂໍໃບຢັ້ງຢືນຜັງເມືອງ ກ່ຽວກັບ ທີ່ຕັ້ງ ແລະ ຮັບຮອງແບບແຜນຜັງເຕັກນິກ ຂອງສາງ ແລະ ປໍ້ານ້ຳມັນເຊື້ອໄຟ ທີ່ບໍລິສັດລົງທຶນເອງ;

(3). ພາຍຫຼັງໄດ້ຮັບໃບຢັ້ງຢືນຜັງເມືອງ ກ່ຽວກັບ ທີ່ຕັ້ງ ແລະ ຮັບຮອງແບບແຜນຜັງເຕັກນິກການກໍ່ສ້າງສາງ ແລະ ປໍ້ານ້ຳມັນເຊື້ອໄຟແລ້ວ ຈຶ່ງສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ສະເໜີຕໍ່ ຂະແໜງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ສັງຄົມ;

(4). ພາຍຫຼັງໄດ້ຮັບໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ສັງຄົມແລ້ວ ຈຶ່ງຂໍອະນຸຍາດປຸກສ້າງສາງ ແລະ ປໍ້ານ້ຳມັນເຊື້ອໄຟຈາກຂະແໜງໂຍທາທິການ ແລະ ຂົນສົ່ງ, ພາຍຫຼັງໄດ້ຮັບອະນຸຍາດປຸກສ້າງແລ້ວ ຈຶ່ງສາມາດລົງມືກໍ່ສ້າງ ແລະ ຕິດຕັ້ງລະບົບປ້ອງກັນອັກຄີໄພ;

(5). ພາຍຫຼັງ ກໍ່ສ້າງສຳເລັດ ໃຫ້ສະເໜີຕໍ່ ຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອລົງກວດກາ ແລະ ຢັ້ງຢືນຮັບຮອງຄວາມຖືກຕ້ອງຂອງການກໍ່ສ້າງ, ພ້ອມດຽວກັນ ກໍ່ໃຫ້ສະເໜີຕໍ່ ຂະແໜງການ ປ້ອງກັນຄວາມສະຫງົບ ເພື່ອລົງກວດກາ ແລະ ອອກໃບຢັ້ງຢືນການກວດກາ ກ່ຽວກັບ ຄວາມປອດໄພທາງດ້ານການສະກັດກັ້ນ ແລະ ຕ້ານອັກຄີໄພ ຂອງສາງ ແລະ ປໍ້ານ້ຳມັນເຊື້ອໄຟ;

(6). ພາຍຫຼັງສຳເລັດຕາມຂັ້ນຕອນ ດັ່ງກ່າວມາຂ້າງເທິງນີ້ແລ້ວ ໃຫ້ເຮັດປະກັນໄພ ຂອງສາງ ແລະ ປໍ້ານ້ຳມັນເຊື້ອໄຟ ຕາມກົດໝາຍ ວ່າດ້ວຍ ການປະກັນໄພ ຂອງ ສປປ ລາວ ແລະ ສະໝັກເຂົ້າເປັນສະມາຊິກສະມາຄົມນ້ຳມັນເຊື້ອໄຟ;

(7). ຫຼັງຈາກໄດ້ເຮັດປະກັນໄພ ແລະ ເຂົ້າເປັນສະມາຊິກສະມາຄົມນ້ຳມັນເຊື້ອໄຟແລ້ວ ໃຫ້ປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະເໜີຕໍ່ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດ ບໍລິສັດ ຈຳໜ່າຍພາຍໃນ;

(8). ພາຍຫຼັງໄດ້ຮັບໃບຢັ້ງຢືນການເຄື່ອນໄຫວທຸລະກິດແລ້ວ ຈຶ່ງສາມາດເຄື່ອນໄຫວທຸລະກິດໄດ້ ຕາມລະບຽບກົດໝາຍ.

**2. ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດຂອງ ປໍ້ານ້ຳມັນເຊື້ອໄຟ**

**2.1. ປໍ້ານ້ຳມັນເຊື້ອໄຟ ທີ່ສ້າງຕັ້ງ ກ່ອນ ປະກາດ ໃຊ້ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ**

ປໍ້ານໍ້າມັນເຊື້ອໄຟ ທີ່ສ້າງຕັ້ງ ກ່ອນ ປະກາດໃຊ້ ດຳລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

(1). ປັບປຸງໃຫ້ສອດຄ່ອງ ຕາມເງື່ອນໄຂ ການຂຶ້ນທະບຽນວິສາຫະກິດ ທີ່ກຳນົດ ໃນມາດຕາ 7 ຂອງດຳລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ໃນກຳນົດເວລາ 02 ປີ ນັບແຕ່ດຳລັດ ດັ່ງກ່າວ ມີຜົນສັກສິດ ແລະ ໄດ້ເຜີຍແຜ່ດຳລັດພ້ອມດ້ວຍຄຳແນະນຳສະບັບນີ້ ແລ້ວປະກອບເອກະສານສະເໜີຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເພື່ອດັດແກ້ທະບຽນວິສາຫະກິດ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ;

(2). ຫຼັງຈາກໄດ້ໃບທະບຽນວິສາຫະກິດ ແລະ ປັບປຸງປໍ້ານໍ້າມັນເຊື້ອໄຟ ພ້ອມທັງເຮັດປະກັນໄພ ຕາມກົດໝາຍວ່າດ້ວຍ ການປະກັນໄພ ຂອງ ສປປ ລາວ ສຳເລັດ ໃຫ້ປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງດຳລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ສະເໜີຕໍ່ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເພື່ອພິຈາລະນາອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດປໍ້ານໍ້າມັນເຊື້ອໄຟ;

(3). ພາຍຫຼັງໄດ້ຮັບໃບຢັ້ງຢືນການເຄື່ອນໄຫວທຸລະກິດແລ້ວ ຈຶ່ງສາມາດເຄື່ອນໄຫວທຸລະກິດໄດ້ ຕາມລະບຽບກົດໝາຍ. ຖ້າປໍ້ານໍ້າມັນເຊື້ອໄຟໃດຫາກບໍ່ສາມາດປັບປຸງໄດ້ຕາມເງື່ອນໄຂ ໃນກຳນົດເວລາ ແມ່ນຕ້ອງໄດ້ໂຈະການເຄື່ອນໄຫວທຸລະກິດ ຈົນກວ່າປັບປຸງສຳເລັດ ແລະ ໄດ້ໃບຢັ້ງຢືນການເຄື່ອນໄຫວທຸລະກິດ ຈຶ່ງສາມາດເຄື່ອນໄຫວທຸລະກິດໄດ້.

**2.2. ປໍ້ານໍ້າມັນເຊື້ອໄຟ ທີ່ສ້າງຕັ້ງ ຫຼັງ ປະກາດ ໃຊ້ດຳລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ**

ການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ ຂອງປໍ້ານໍ້າມັນເຊື້ອໄຟ ຫຼັງ ປະກາດ ໃຊ້ດຳລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

(1) ປະກອບເອກະສານສະເໜີຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ;

(2) ຫຼັງຈາກໄດ້ໃບທະບຽນວິສາຫະກິດແລ້ວ ໃຫ້ສະເໜີຕໍ່ ຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອອອກໃບຢັ້ງຢືນຜັງເມືອງ ກ່ຽວກັບ ທີ່ຕັ້ງ ແລະ ຮັບຮອງແບບແຜນຜັງເຕັກນິກການກໍ່ສ້າງປໍ້ານໍ້າມັນເຊື້ອໄຟ;

(3) ພາຍຫຼັງໄດ້ຮັບໃບຢັ້ງຢືນຜັງເມືອງ ກ່ຽວກັບ ທີ່ຕັ້ງ ແລະ ຮັບຮອງແບບແຜນຜັງເຕັກນິກ ການກໍ່ສ້າງປໍ້ານໍ້າມັນເຊື້ອໄຟແລ້ວ ຈຶ່ງສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂອງປໍ້ານໍ້າມັນເຊື້ອໄຟ ແລະ ສະເໜີຕໍ່ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອອອກໃບຢັ້ງຢືນ;

(4) ພາຍຫຼັງໄດ້ຮັບໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ສັງຄົມແລ້ວ ຈຶ່ງຂໍອະນຸຍາດປຸກສ້າງປໍ້ານໍ້າມັນເຊື້ອໄຟຈາກຂະແໜງໂຍທາທິການ ແລະ ຂົນສົ່ງ, ພາຍຫຼັງໄດ້ຮັບອະນຸຍາດປຸກສ້າງແລ້ວ ຈຶ່ງສາມາດລົງມືກໍ່ສ້າງ ແລະ ຕິດຕັ້ງລະບົບປ້ອງກັນອັກຄີໄພ;

(5) ພາຍຫຼັງ ກໍ່ສ້າງປໍ້ານໍ້າມັນເຊື້ອໄຟ ສຳເລັດ ໃຫ້ສະເໜີຕໍ່ຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອລົງກວດກາ ແລະ ຢັ້ງຢືນຮັບຮອງຄວາມຖືກຕ້ອງຂອງການກໍ່ສ້າງປໍ້ານໍ້າມັນເຊື້ອໄຟ, ພ້ອມດຽວກັນ ກໍ່ໃຫ້ສະເໜີຕໍ່ ຂະແໜງປ້ອງກັນຄວາມສະຫງົບ ເພື່ອລົງກວດກາ ແລະ ອອກໃບຢັ້ງຢືນການກວດກາ ກ່ຽວກັບ ຄວາມປອດໄພທາງດ້ານການສະກັດກັ້ນ ແລະ ຕ້ານອັກຄີໄພ ແລະ ໃຫ້ເຮັດປະກັນໄພປໍ້ານໍ້າມັນເຊື້ອໄຟ ຕາມກົດໝາຍ ວ່າດ້ວຍ ການປະກັນໄພ ຂອງ ສປປ ລາວ;

(6) ຫຼັງຈາກເຮັດປະກັນໄພແລ້ວ ໃຫ້ປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງດຳລັດ ວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ສະເໜີເຖິງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເພື່ອພິຈາລະນາອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດປໍ້ານໍ້າມັນເຊື້ອໄຟ;

(7) ພາຍຫຼັງໄດ້ຮັບໃບຢັ້ງຢືນການເຄື່ອນໄຫວທຸລະກິດແລ້ວ ຈຶ່ງສາມາດເຄື່ອນໄຫວທຸລະກິດໄດ້ ຕາມລະບຽບກົດໝາຍ.

3. ການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດຂອງ ບໍລິສັດ ໃຫ້ເຊົ່າສາງນໍ້າມັນເຊື້ອໄຟ

ການສ້າງຕັ້ງ ແລະ ເຄື່ອນໄຫວຂອງບໍລິສັດ ໃຫ້ເຊົ່າສາງນໍ້າມັນເຊື້ອໄຟ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

(1) ປະກອບເອກະສານແຈ້ງຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ;

(2) ຫຼັງຈາກໄດ້ໃບທະບຽນວິສາຫະກິດແລ້ວ ໃຫ້ສະເໜີຕໍ່ ຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອອອກໃບຢັ້ງຢືນຜັງເມືອງ ກ່ຽວກັບ ທີ່ຕັ້ງ ແລະ ຮັບຮອງ ແບບແຜນຜັງເຕັກນິກການກໍ່ສ້າງສາງນໍ້າມັນເຊື້ອໄຟ;

(3) ພາຍຫຼັງໄດ້ຮັບໃບຢັ້ງຢືນຜັງເມືອງ ກ່ຽວກັບ ທີ່ຕັ້ງ ແລະ ຮັບຮອງ ແບບແຜນຜັງເຕັກນິກການກໍ່ສ້າງສາງນໍ້າມັນເຊື້ອໄຟແລ້ວ ຈຶ່ງສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂອງສາງນໍ້າມັນເຊື້ອໄຟ ແລະ ສະເໜີຕໍ່ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອອອກໃບຢັ້ງຢືນ;

(4) ພາຍຫຼັງໄດ້ຮັບໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ສັງຄົມແລ້ວ ຈຶ່ງຂໍອະນຸຍາດປຸກສ້າງສາງ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງ, ພາຍຫຼັງໄດ້ຮັບອະນຸຍາດປຸກສ້າງແລ້ວ ຈຶ່ງສາມາດລົງມືກໍ່ສ້າງສາງ ແລະ ຕິດຕັ້ງລະບົບປ້ອງກັນອັກຄີໄພ;

(5) ພາຍຫຼັງ ກໍ່ສ້າງສາງ ສຳເລັດ ໃຫ້ສະເໜີຕໍ່ຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອລົງກວດກາ ແລະ ຢັ້ງຢືນຮັບຮອງຄວາມຖືກຕ້ອງຂອງການກໍ່ສ້າງສາງ ພ້ອມດຽວກັນ ກໍ່ໃຫ້ສະເໜີຕໍ່ ຂະແໜງປ້ອງກັນຄວາມສະຫງົບ ເພື່ອລົງກວດກາ ແລະ ອອກໃບຢັ້ງຢືນການກວດກາກ່ຽວກັບ ຄວາມປອດໄພທາງດ້ານການສະກັດກັ້ນ ແລະ ຕ້ານອັກຄີໄພ ແລະ ໃຫ້ເຮັດປະກັນໄພ ສາງນໍ້າມັນເຊື້ອໄຟ ຕາມກົດໝາຍ ວ່າດ້ວຍ ການປະກັນໄພ ຂອງ ສປປ ລາວ ພ້ອມດຽວກັນກໍໃຫ້ສະໝັກເຂົ້າເປັນສະມາຊິກ ສະມາຄົມນໍ້າມັນເຊື້ອໄຟ;

(6) ຫຼັງຈາກເຮັດປະກັນໄພ ແລະ ໄດ້ເຂົ້າເປັນສະມາຊິກ ສະມາຄົມນໍ້າມັນເຊື້ອໄຟ ແລ້ວ ໃຫ້ປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງດຳລັດ ວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ສະເໜີຕໍ່ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດໃຫ້ເຊົ່າສາງນໍ້າມັນເຊື້ອໄຟ;

(7) ພາຍຫຼັງໄດ້ຮັບໃບຢັ້ງຢືນການເຄື່ອນໄຫວທຸລະກິດແລ້ວ ຈຶ່ງສາມາດເຄື່ອນໄຫວທຸລະກິດໄດ້ ຕາມລະບຽບກົດໝາຍ.

## IV. ການສ້າງແຜນຈຳໜ່າຍນໍ້າມັນເຊື້ອໄຟ ປະຈຳປີ

ບໍລິສັດຈຳໜ່າຍພາຍໃນ ເປັນຜູ້ສ້າງແຜນຈຳໜ່າຍນໍ້າມັນເຊື້ອໄຟ ປະຈຳປີ ຍື່ນຕໍ່ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນວັນທີ 31 ເດືອນຕຸລາ ຂອງທຸກປີ ຕາມທີ່ກຳນົດໄວ້ໃນມາດຕາ 16 ຂອງດຳລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ເພື່ອຢັ້ງຢືນ.

## V. ການອະນຸຍາດນຳເຂົ້ານໍ້າມັນເຊື້ອໄຟ

ບໍລິສັດນຳເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ ເປັນຜູ້ຂໍອະນຸຍາດນຳເຂົ້ານໍ້າມັນເຊື້ອໄຟ ຕໍ່ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນວັນທີ 31 ເດືອນຕຸລາ ຂອງທຸກປີ ຕາມທີ່ກຳນົດໄວ້ໃນມາດຕາ 16 ຂອງດາລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ເພື່ອພິຈາລະນາຄົ້ນຄວ້າ.

## VI. ອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ

ອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟສຳລັບຂະແໜງອຸດສາຫະກຳ ແລະ ການຄ້າ ປະກອບມີ:

1. ຂັ້ນສູນກາງ ແມ່ນກົມການຄ້າພາຍໃນ ເປັນເຈົ້າການໂດຍປະສານສົມທົບກັບ ກົມການນຳເຂົ້າ ແລະ ສົ່ງອອກ.
2. ຂັ້ນແຂວງ, ນະຄອນຫຼວງ ແມ່ນພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ.
3. ຂັ້ນເມືອງ, ເທດສະບານ ແມ່ນຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ.

VII. ການຈັດຝຶກອົບຮົມກ່ຽວກັບການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ:

ອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ຂະແໜງອຸດສາຫະກຳ ແລະ ການຄ້າ ສົມທົບກັບກົມກອງ, ຂະແໜງການກ່ຽວຂ້ອງ ແລະ ສະມາຄົມນ້ຳມັນເຊື້ອໄຟ ຈັດຝຶກອົບຮົມ ໃຫ້ຜູ້ທີ່ດຳເນີນທຸລະກິດນ້ຳມັນເຊື້ອໄຟ ຢ່າງໜ້ອຍ 01 ຄັ້ງ/ປີ ກ່ຽວກັບ:

1. ການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ, ການຈຳໜ່າຍ, ການຜ່ານແດນ, ປ້ຳ ແລະ ບໍລິການເຊົ່າສາງນ້ຳມັນເຊື້ອໄຟ.
2. ການຄຸ້ມຄອງບັນຊີບໍລິສັດ, ປ້ຳນ້ຳມັນເຊື້ອໄຟ.
3. ການຄຸ້ມຄອງ ກ່ຽວກັບ ຄວາມປອດໄພດ້ານອັກຄີໄພຂອງສາງ, ປ້ຳນ້ຳມັນເຊື້ອໄຟ.
4. ການຄຸ້ມຄອງ ກ່ຽວກັບ ການຂົນສົ່ງ ແລະ ບໍລິການເຊົ່າພາຫະນະຂົນສົ່ງນ້ຳມັນເຊື້ອໄຟ.
5. ການຄຸ້ມຄອງ ກ່ຽວກັບ ຄຸນນະພາບນ້ຳມັນເຊື້ອໄຟ.
6. ການຄຸ້ມຄອງອື່ນທີ່ກ່ຽວຂ້ອງ.

VIII. ມາດຕະການປັບໃໝ

ຖ້າຫົວໜ່ວຍທຸລະກິດໃດບໍ່ປະຕິບັດຕາມເງື່ອນໄຂຂອງດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ແລະ ຄຳແນະນຳສະບັບນີ້ ຈະຖືກປະຕິບັດຕາມມາດຕະການທີ່ກຳນົດໃນພາກທີ IX ຂອງດຳລັດຢ່າງເຂັ້ມງວດ.

IX. ການຈັດຕັ້ງປະຕິບັດ

ມອບໃຫ້ ກົມການຄ້າພາຍໃນ ເປັນເຈົ້າການປະສານສົມທົບກັບ ກົມກອງກ່ຽວຂ້ອງ ແລະ ຂະແໜງການກ່ຽວຂ້ອງ ພ້ອມດ້ວຍສະມາຄົມນ້ຳມັນເຊື້ອໄຟ ເຜີຍແຜ່ຄຳແນະນຳສະບັບນີ້.

ມອບໃຫ້ ອົງການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ຂະແໜງອຸດສາຫະກຳ ແລະ ການຄ້າ ສົມທົບກັບກົມກອງກ່ຽວຂ້ອງ, ຂະແໜງການກ່ຽວຂ້ອງ ແລະ ຫົວໜ່ວຍທຸລະກິດນ້ຳມັນເຊື້ອໄຟ ເປັນຜູ້ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.

ຫົວໜ່ວຍທຸລະກິດນ້ຳມັນເຊື້ອໄຟ ທີ່ດຳເນີນການເຄື່ອນໄຫວທຸລະກິດ ກ່ອນ ປະກາດໃຊ້ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ໃຫ້ປັບປຸງຕົນເອງຕາມເງື່ອນໄຂ ແລະ ຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນດຳລັດ ແລະ ຄຳແນະນຳສະບັບນີ້.

ບຸກຄົນ, ນິຕິບຸກຄົນ ທີ່ສະເໜີ ສ້າງຕັ້ງກ່ອນ ປະກາດໃຊ້ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ແມ່ນໃຫ້ປະຕິບັດ ຕາມຂັ້ນຕອນຂອງຄຳແນະນຳສະບັບນີ້; ສ່ວນຜູ້ສະເໜີ ສ້າງຕັ້ງ ຫຼັງ ປະກາດໃຊ້ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ແມ່ນໃຫ້ລໍຖ້າ ບໍລິສັດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວ ກ່ອນ ປະກາດໃຊ້ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ປັບປຸງສຳເລັດ ຕາມກຳນົດໄວ້ໃນ ຂໍ້ II ຂອງຄຳແນະນຳສະບັບນີ້ ຈຶ່ງຮັບເອກະສານສະເໜີສ້າງຕັ້ງ.

ຄຳແນະນຳສະບັບນີ້ ມີຜົນສັກສິດຫຼັງຈາກລົງລາຍເຊັນ ແລະ ພາຍຫຼັງ ສິບຫ້າວັນ ນັບແຕ່ວັນພິມລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດຖະມົນຕີ

ນາງ ເຂັມມະນີ ພົນເສນາ